# ຄົນງານທີ່ຂາດທັກສະ - ອຸດສາຫະກຳການບໍລິການ <ລົດຍົກ>

## 단순노무자- 서비스업 〈지게차〉

2018-교육미디어-371

## ⚠ ຕົວຢ່າງຂອງອຸບັດຕິເຫດກ່ຽວກັບລົດຍົກທີ່ສຳຄັນ 지게차 주요 재해사례

### ກໍລະນີ 1 사례 1

### ຕົກລົດໃນເວລາເຮັດຄວາມສະອາດກະຈົກປ່ອງຢ້ຽມ ໃນຂະນະກຳລັງຢືນຢູ່ເທິງສ້ອມຂອງລົດຍົກ

지게차의 포크 위에서 유리창 청소작업 중 떨어짐

ເພື່ອເຮັດຄວາມສະອາດກະຈົກປ່ອງຢ້ຽມດ້ານນອກໂກດັງຢູ່ທີ່ທ່າຂົນສິນຄ້າຂອງສູນຈຳໜ່າຍສິນຄ້າ, ຄົນງານສອງຄົນຢືນຢູ່ເທິງແທ່ນວາງສິນຄ້າທີ່ນຳຂຶ້ນໄວ້ເທິງລົດຍົກແລ້ວ ແລະ ເຮັດຄວາມສະອາດກະຈົກປ່ອງຢ້ຽມ, ແລ້ວກໍຕົກລົງມາ ເຊິ່ງເກີດຈາກພຶດຕິກຳທີ່ບໍ່ປອດໄພ.

물류센터 하역장 내에서 건물 외부에 설치된 유리창을 청소하기 위해 작업자 2명이 지게차 포크에 팔레트를 끼워 올라가 유리창 청소작업 실시 중 불안전한 행동으로 떨어짐

#### ສາເຫດຂອງອຸປະຕິເຫດ 재해원인

- ການໃຊ້ລົດຍົກກັບວຽກທີ່ບໍ່ເໝາະສົມຕາມການອອກແບບມາຂອງມັນ
  지게차 목적 외 사용
- ການບໍ່ນັ່ງຢູ່ບ່ອນນັ່ງຜູ້ໂດຍສານ
  승차석 외 탑승

#### ມາດຕະການປ້ອງກັນ 예방대책

- ຫ້າມບໍ່ໃຫ້ໃຊ້ໃນວຽກທີ່ບໍ່ເໝາະສົມກັບການອອກແບບມາຂອງມັນ ແລະ ນັ່ງຢູ່ນອກບ່ອນນັ່ງຜູ້ໂດຍສານ
  지게차 목적 외 사용 및 승차석 외 탑승금지
- ການປ່ຽນວິທີການເຮັດວຽກ
  작업방법 변경



### ກໍລະນີ 2 사례 2

### ການພິກຂວ້ຳຂອງລົດຍົກ ໃນຂະນະປີນຂຶ້ນແປງດອກໄມ້

높이 차이가 있는 화단 턱을 올라가 지게차 넘어짐

ຄົນຂັບລົດຍົກບໍ່ໄດ້ແນມໄປທາງໜ້າ ແລ້ວເຮັດໃຫ້ລໍ້ລົດຍົກປີນຂຶ້ນໄປເທິງຂອບຖະໜົນໃນສະຖານທີ່ເຮັດວຽກ. ຫຼັງຈາກນັ້ນລົດກໍພິກຂວ້ຳ, ເສຍຄວາມສົມດຸນ ແລະ ເປັນສາເຫດໃຫ້ຄົນຂັບຕິດຢູ່ລະຫວ່າງລົດຍົກ ແລະ ພື້ນດິນ

지게차 운전자가 전방 주시를 소홀히 하여 사업장 내 도로 가장자리 화단 경계석을 지게차 한쪽 바퀴가 올라타면서 지게차가 중심을 잃고 넘어져 운전자가 지게차와 지면 사이에 끼임

#### ສາເຫດຂອງອຸປະຕິເຫດ 재해원인

- ການບໍ່ແນມໄປທາງໜ້າ ໃນຂະນະກຳລັງຄວບຄຸມລົດຍົກ
  지게차 운행 시 전방 주시 소홀
- ການບໍ່ປະຕິບັດການກວດສອບກ່ອນປ່ຽນເວນ ຫຼື ກະກຽມແຜ່ນວຽກ
  사전조사 및 작업계획서 미작성
- ຂາດມາດຕະການປ້ອງກັນກ່ຽວກັບການຕົກລົງມາ
  넘어짐 등의 방지조치 결여
- ການບໍ່ຮັດເຂັມຂັດ
  좌석 안전띠 미착용

#### ມາດຕະການປ້ອງກັນ 예방대책

- ໃຫ້ແນ່ໃຈວ່າໄດ້ແນມໄປທາງໜ້າໃນຂະນະຄວາມຄຸມລົດຍົກ
  지게차 운행 시 전방 주시 철저
- ກະກຽມແຜ່ນວຽກ ແລະ ປະຕິບັດການເຮັດວຽກຢ່າງປອດໄພ
  작업계획서 작성 및 안전작업 실시
- ແຕ່ງຕັ້ງຄົນເຝົ້າສັງເກດການ ໃນເວລາເຮັດວຽກຢູ່ໃນບໍລິເວນທີ່ເປັນອັນຕະລາຍ
  위험장소에서 작업 시 지게차 유도자 배치
- ຮັດເຂັມຂັດ
  좌석 안전띠 착용



## ກໍລະນີ 3
사례 3

## ການຂົນກັນໃນລະຫວ່າງການຖອຍລົດຍົກ
지게차 후진 작업 중 부딪힘

ໃນຂະນະຄົນຂັບລົດຍົກຂະໜາດ 3 ໂຕນກຳລັງຖອຍລົດ ໃນຂະນະທີ່ກຳລັງຂົນສິນຄ້າຢູ່ທີ່ໂກດັງແຜ່ນແພ, ລາວບໍ່ເຫັນເພື່ອນຄົນງານທີ່ຢູ່ດ້ານຫຼັງ ແລ້ວໄດ້ຂົນລາວ.

3톤 지게차 운전자가 섬유원단 보관창고에서 화물을 운반하던 중 동료작업자를 발견하지 못한 채 후진하다 부딪힘



### ສາເຫດຂອງອຸປະຕິເຫດ 재해원인

- ການຄວບຄຸມລົດຍົກໂດຍຄົນທີ່ບໍ່ມີຄຸນສົມບັດເໝາະສົມ ແລະ ບໍ່ມີໃບອະນຸຍາດ
  지게차 운전면허가 없는 무자격자가 운전
- ການບໍ່ກະກຽມແຜ່ນວຽກສຳລັບອຸປະກອນຍົກຂົນສິນຄ້າ ເຊັ່ນວ່າ ລົດຍົກ
  지게차 등 차량계 하역운반기계 작업계획서 미작성
- ການບໍ່ເຫັນດ້ານຫຼັງໃນເວລາຖອຍລົດ
  지게차 후진 시 시야확보 미흡




### ມາດຕະການປ້ອງກັນ 예방대책

- ໃຫ້ແນ່ໃຈວ່າມີການຄວບຄຸມລົດຍົກໂດຍຜູ້ທີ່ມີຄຸນສົມບັດເໝາະສົມ
  유자격자에 의한 지게차 운전
- ກະກຽມແຜ່ນວຽກສຳລັບອຸປະກອນຍົກຂົນສິນຄ້າ ແລະ ເຮັດຄວາມຄຸ້ນເຄີຍກັບລາຍລະອຽດໃນແຜ່ນວຽກ
  차량계 하역운반기계 작업계획서 작성 및 주지
- ຂໍແນະນຳໃຫ້ຕິດຕັ້ງເຊັນເຊີຖອຍຫຼັງ ແລະ ກ້ອງແນມຫຼັງໃນລົດຍົກ ເພື່ອໃຫ້ສາມາດແນມເຫັນດ້ານຫຼັງໄດ້ຈາກບ່ອນນັ່ງຂອງຄົນຂັບ.
  운전석에서 확인 가능한 지게차 후방 경보장치 및 후방 카메라 설치 권장




### ຫຼັກການເບື້ອງຕົ້ນໃນການໃຊ້ລົດຍົກຢ່າງປອດໄພ 3 ຫຼັກການ
지게차 안전작업 3원칙

1. ອະນຸຍາດໃຫ້ບຸກຄົນທີ່ມີຄຸນສົມບັດເໝາະສົມຄວບຄຸມລົດໄດ້ເທົ່ານັ້ນ
   유자격자 운전
2. ຕ້ອງແນມເຫັນດ້ານໜ້າ ແລະ ດ້ານຫຼັງຂອງລົດໄດ້ຕະຫຼອດ
   전·후방 시야 확보
3. ຮັດເຂັມຂັດນິລະໄພ
   안전띠 체결

# ຄວາມປອດໄພໃນການເຮັດວຽກໃນເວລາໃຊ້ເລື່ອຍສາຍພານສໍາລັບການແປຮູບອາຫານ

골절기 사용 시 작업 안전

2018-교육미디어-372

## ⚠ ກໍລະນີເກີດອຸປະຕິເຫດ 재해사례



• ໃນຂະນະກໍາລັງຊອຍວັດຖຸດິບ (ຊີ້ນແຊ່ແຂງ) ໂດຍການໃຊ້ເລື່ອຍສາຍພານກ່ອນທີ່ຈະນໍາຊີ້ນແຊ່ແຂງໄປຄົວກິນໃນຫ້ອງຄົວຂອງຮ້ານອາຫານ, ມືຂອງຄົນງານມື່ນ ແລ້ວໄປຖືກໃບເລື່ອຍ, ເປັນຜົນເຮັດໃຫ້ນີ້ວຊີ້ຖືກຕັດຂາດ

식당 조리실에서 냉동 육류를 조리하기 위하여 골절기를 이용하여, 재료(냉동육) 절단작업을 하던 중 근로자가 손이 미끄러지면서 손가락이 톱날에 접촉되어 검지 끝마디가 절단

## ເລື່ອຍສາຍພານສໍາລັບແປຮູບອາຫານແມ່ນຫຍັງ? 골절기란?

ເລື່ອຍສາຍພານສໍາລັບແປຮູບອາຫານໝາຍເຖິງເຄື່ອງຊອຍຊີ້ນ, ເປັດໄກ່, ຫຼື ປາໃຫ້ມີຂະໜາດຕາມທີ່ກໍານົດ, ໂດຍໃຊ້ແຮງໝຸນຂອງໃບມີດຕັດ. ຜູ້ທີ່ໃຊ້ເປັນຫຼັກແມ່ນຄົນຂາຍຊີ້ນ, ບໍລິສັດແປຮູບຊີ້ນ, ແລະຮ້ານອາຫານ, ແລະ ແມ່ນວ່າຊີ້ນແຊ່ແຂງກໍສາມາດຊອຍໄດ້.

골절기(Band saw machine for food processing)라 함은 절단날의 회전력을 이용하여 육류, 조류 또는 어류 등을 일정 크기로 자르는 기계를 말한다. 주로 정육점, 육가공업체, 식당에서 사용하며, 냉동 상태의 육류도 절단이 가능하다.

## ອັນຕະລາຍ / ປັດໃຈສ່ຽງສໍາຄັນ
주요 유해·위험 요인

- ນີ້ວມືຖືກດຶງເຂົ້າໄປໃນໃບເລື່ອຍແບບໝຸນ ໃນຂະນະທີ່ສວມໃສ່ຖົງມືຜ້າຝ້າຍ
  면장갑을 낀 상태에서 회전 톱날에 손가락이 말림
- ບາດມື ຫຼື ນີ້ວຍ້ອນການສໍາຜັດກັບໃບມີດທີ່ກໍາລັງໝຸນ
  면회전하는 칼날에 손이나 손가락이 접촉하여 베임
- ຊີ້ນສ່ວນກະດູກ ຫຼື ໃບເລື່ອຍທີ່ຟົ້ງກະເດັນເຂົ້າຕາ ຫຼື ໜ້າຂອງຄົນງານໃນເວລາກໍາລັງຊອຍຊີ້ນx
  절단 시 뼈 또는 톱날 조각이 눈이나 얼굴 안면에 맞음
- ຊີ້ນແຊ່ແຂງທີ່ຖືກຊອຍ ຫຼື ວັດຖຸດິບອື່ນໆຢູ່ເທິງໂຕະເຮັດວຽກຕົກລົງໃສ່ຕີນຂອງຄົນງານ
  절단하던 냉동육 또는 작업대 위에 있는 재료가 발등으로 떨어짐
- ໄຟຟ້າຊັອດທີ່ມີສາເຫດມາຈາກການລັດວົງຈອນຍ້ອນການຫຸ້ມສາຍໄຟຟ້າຂອງມໍເຕີ ແລະ ສາຍໄຟເສື່ອມສະພາບ
  전동기 및 배선의 절연열화에 의한 누전에 의한 감전

고용노동부 산업재해예방 안전보건공단

OPEN 출처표시 공공누리 공공저작물 자유이용허락

LAOS

## ໂຄງສ້າງຂອງເລື່ອຍສາຍພານສຳລັບການແປຮູບອາຫານ ແລະ ຊື່ຂອງແຕ່ລະຊິ້ນສ່ວນ
골절기 구조 및 각부 명칭




## ມາດຕະການດ້ານຄວາມປອດໄພ
안전대책

- ຕິດຝາຄອບ ແລະ ໃຫ້ມີສະມາທິ
  보호 덮개 부착 및 주의 집중 필요
- ສວມໃສ່ອຸປະກອນປ້ອງກັນ (ແວ່ນຄອບຕານິລະໄພ, ຖົງມືນິລະໄພ (ປ້ອງກັນບໍ່ໃຫ້ບາດ), ເກີບນິລະໄພ, ແລະອື່ນໆ.)
  보호구 착용(보안경, 안전장갑(절단방지용), 안전화 등)
- ຕິດຕັ້ງອຸປະກອນຢຸດສຸກເສີນ
  비상정지장치 설치
- ກວດສອບໃຫ້ແນ່ໃຈວ່າເຄື່ອງຈັກໄດ້ຕໍ່ສາຍດິນຢ່າງຖືກຕ້ອງ ແລະ ເສີມດ້ວຍການຫຸ້ມສາຍໄຟຟ້າແລ້ວ
  접지 실시 및 절연 보강








# ຄວາມປອດໄພໃນການເຮັດວຽກ ໃນເວລາໃຊ້ເຄື່ອງຊອຍຊີ້ນ

## 육절기(슬라이서) 사용 시 작업 안전

2018-교육미디어-373

### ⚠ ກໍລະນີເກີດອຸປະຕິເຫດ 재해사례



- ໃນຂະນະທີ່ລູກຈ້າງລາຍວັນຄົນໜຶ່ງໄດ້ກຳລັງເຮັດຄວາມສະອາດເຄື່ອງຊອຍຊີ້ນຢູ່ທີ່ພະແນກຊີ້ນ, ເຄື່ອງກໍໄດ້ເປີດຂຶ້ນໂດຍບັງເອີນ, ເຊິ່ງຕັດຂໍ້ມືຊ້າຍຂອງຄົນງານດ້ວຍໃບມີດທີ່ກຳລັງໝຸນ.

  정육코너에서 일용직 근로자가 냉장육절기를 청소하던 중 스위치를 잘못 작동시켜 기계가 작동되면서 회전하는 원형 칼날에 왼쪽 손목 절단

### ເຄື່ອງຊອຍຊີ້ນແມ່ນຫຍັງ? 육절기란?

ເຄື່ອງຊອຍຊີ້ນໝາຍເຖິງເຄື່ອງຊອຍວັດຖຸດິບທີ່ມີລັກສະນະຄ້າຍຄືຊີ້ນ ເຊັ່ນວ່າ ຊີ້ນທີ່ບໍ່ມີກະດູກ ແລະ ແຮມ, ແລະ ທີ່ໃຊ້ເປັນຫຼັກໃນຮ້ານອາຫານ ແລະ ພະແນກຊີ້ນ ແລະ ເປັດໄກ່ຢູ່ທີ່ຮ້ານຂາຍຂອງກິນ. ສຳລັບຊີ້ນແຊ່ແຂງຄວນໃຊ້ເຄື່ອງຊອຍຊີ້ນແຊ່ແຂງພິເສດ, ໃນຂະນະທີ່ຄວນໃຊ້ເຄື່ອງຊອຍຊີ້ນແບບທຳມະດາກັບຊີ້ນທີ່ມີກະດູກ.

육절기(슬라이서)란 뼈없는 고기, 햄과 같은 연육상태의 재료를 자르는 기계로 주로 음식점, 마트 축산 코너에서 사용되고 있다. 냉동육은 전용 냉동육절기를 사용하여야 하며, 특히 뼈가 있는 고기는 골절기를 사용해야 한다.

### ອັນຕະລາຍ/ປັດໃຈສ່ຽງຕົ້ນຕໍ
주요 유해·위험 요인

- ອຸບັດຕິເຫດໃນເວລາໃຊ້ເຄື່ອງຊອຍຊີ້ນສ່ວນໃຫຍ່ແລ້ວເກີດຈາກໃບມີດທີ່ກຳລັງໝຸນ

  육절기의 재해는 주로 칼날 회전부에서 발생

  - ຄວາມສ່ຽງທີ່ຈະຖືກບາດຈາກການສຳຜັດກັບໃບມີດທີ່ກຳລັງໝຸນ

    칼날 회전부에 신체 접촉에 의한 절단 위험
  - ຄວາມສ່ຽງທີ່ຈະຖືກຕັດຈາກການສຳຜັດກັບໃບມີດ ໃນຂະນະເຮັດຄວາມສະອາດພ້ອມກັບເປີດເຄື່ອງ

    전원을 켜 놓은 상태에서 청소 중 칼날에 신체 접촉으로 절단 위험
  - ຄວາມສ່ຽງທີ່ຈະຖືກໄຟຟ້າຊັອດ ເຊິ່ງມີສາເຫດຈາກການລັດວົງຈອນຍ້ອນສະນວນຂອງສ່ວນຂັບເຄື່ອນເພພັງເສຍຫາຍ

    구동부의 절연 파괴로 누전에 의한 감전 위험




※ຫ້າມບໍ່ໃຫ້ຖອດແຜ່ນປ້ອງກັນ (ແຜ່ນຄວບຄຸມຄວາມໜາ);
ເຖິງຢ່າງໃດກໍຕາມ, ອຸບັດຕິເຫດໄດ້ເກີດຂຶ້ນແລ້ວໃນເວລາທີ່ຖອດແຜ່ນອອກມາເຮັດຄວາມສະອາດຢ່າງລະອຽດ ໂດຍບໍ່ຮູ້ເຖິງດ້ານອັນຕະລາຍຂອງເຄື່ອງ

안전판(두께조절판)을 쉽게 분해하지 못하도록 되어 있으나 기계의 위험성을 모르고 깨끗이 청소하려고 분해하여 청소하는 경우에 재해 발생

## ມາດຕະການດ້ານຄວາມປອດໄພ
안전대책

- ຕິດຕັ້ງອຸປະກອນປ້ອງກັນ ແລະ ຫ້າມບໍ່ໃຫ້ເອົາມັນອອກ
  보호 덮개 설치 및 제거 금지



ເມື່ອຕ້ອງຖອດອຸປະກອນປ້ອງກັນອອກ
방호 덮개가 탈거 된 상태



ອຸປະກອນປ້ອງກັນ (ແບບລວມຊຸດ)
방호 덮개 (일체형)

- ປິດສະວິດໃນເວລາຈະເອົາສິ່ງຕົກຄ້າງ ແລະ ເສດຊີ້ນອອກ ຫຼື ເຮັດຄວາມສະອາດ
  찌꺼기, 이물질 제거 또는 청소 시 전원 차단
- ຕິດຕັ້ງອຸປະກອນຢຸດສຸກເສີນ
  비상정지장치 설치
- ຢ່າໃຊ້ນ້ຳລ້າງດ້ານໃນ
  육절기 내부 물청소 금지
- ໃຊ້ອຸປະກອນຊ່ວຍປ້ອນເພື່ອຈັບວັດຖຸດິບ ໃນເວລາເຄື່ອງກຳລັງເຮັດວຽກ
  재료 가공 시 재료를 잡을 수 있는 공급 보조 도구 사용

# ປັດໃຈສ່ຽງ ແລະ ມາດຕະການດ້ານຄວາມປອດໄພສໍາລັບເຄື່ອງກໍາຈັດຂອງເສຍຈາກອຸດສາຫະກໍາ

산업폐기물 기계장치 위험요소와 안전대책

2018-교육미디어-374

## ⚠ ກໍລະນີເກີດອຸປະຕິເຫດ 재해사례



• ໃນຂະນະກໍາລັງເຮັດຄວາມສະອາດອຸປະກອນລໍາລຽງຢູ່ທີ່ສະຖານທີ່ກໍາຈັດເສດຄອນກຣີດ, ແຂນຂວາຂອງຄົນງານກໍພັນເຂົ້າໄປຢູ່ລະຫວ່າງສາຍພານ ແລະ ຊຸດລູກລໍ້, ແລ້ວກໍເສຍຊີວິດຈາກບາດແຜຂອງລາວ

콘크리트 폐기물 처리 작업장에서 컨베이어 청소작업 중이던 근로자가 벨트와 풀리 사이에 오른팔이 감겨 사망하는 사고 발생

## ອັນຕະລາຍ ແລະ ປັດໃຈສ່ຽງຂອງອຸປະກອນລໍາລຽງ
컨베이어 유해·위험요인

- ການຕົກລົງມາຂອງສິ່ງທີ່ບັນທຸກຢູ່ຈາກສາຍພານລໍາລຽງ
  컨베이어 적재물 떨어짐
- ຊຸດເຮັດວຽກເສຍຫາຍ ຫຼື ສ່ວນຕ່າງໆຂອງຮ່າງກາຍໄດ້ຮັບບາດເຈັບ ຫຼື ຕິດຢູ່ໃນ ຫຼື ເທິງສາຍພານລໍາລຽງ, ໂສ້, ແລະ ນັອດກຽວ
  컨베이어 벨트, 체인, 스크류에 작업복이나 신체 일부가 감김·끼임
- ການຕົກລົງມາຈາກຊ່ອງເປີດດ້ານເທິງສຸດ, ແລະ ດ້ານລຸ່ມສຸດຂອງສາຍພານລໍາລຽງ
  컨베이어 상부, 피트, 바닥 개구부에서 떨어짐

## ອັນຕະລາຍ ແລະ ປັດໃຈສ່ຽງຂອງເຄື່ອງບົດ
파쇄기 유해·위험요인

- ຄວາມສ່ຽງທີ່ຈະຖືກຟາດ ຫຼື ຕົກລົງມາຈາກຈອຍປ້ອນວັດຖຸດິບ
  원석 투입부분에서 부딪힘, 떨어짐 위험
- ຄວາມສ່ຽງທີ່ຈະໄດ້ຮັບບາດເຈັບ ຫຼື ຖືກຟາດໂດຍສ່ວນຕ່າງໆທີ່ກໍາລັງເຮັດວຽກຢູ່ຂອງເຄື່ອງບົດ
  파쇄기 작동부분에서 말림, 끼임 위험
- ຄວາມສ່ຽງທີ່ຈະໄດ້ຮັບບາດເຈັບ ຫຼື ຖືກຟາດໂດຍຊິ້ນສ່ວນຕ່າງໆຂອງລໍ້ຊ່ວຍແຮງ ແລະ ລະບົບສົ່ງກໍາລັງທີ່ມີການໝູນ
  플라이 휠 및 동력전달장치 등의 회전운동부분에서 말림, 끼임 위험
- ຄວາມສ່ຽງທີ່ຈະຕົກລົງມາຈາກແທ່ນເຮັດວຽກດ້ານເທິງຂອງເຄື່ອງບົດ
  파쇄기의 상부 작업발판에서 떨어짐 위험
- ຄວາມສ່ຽງທີ່ຈະຖືກໄຟຟ້າຊອດຍ້ອນຊິ້ນສ່ວນຕ່າງໆທີ່ກໍາລັງສາກໄຟ
  전기충전부에서 감전 위험

고용노동부 산업재해예방 안전보건공단

OPEN 출처표시 공공누리 공공저작물 자유이용허락

LAOS

## ມາດຕະການດ້ານຄວາມປອດໄພຂອງຄົນງານ ແລະ ຂັ້ນຕອນສໍາລັບການກໍາຈັດຂອງເສຍຈາກອຸດສາຫະກໍາ
산업폐기물 기계장치 작업 근로자 안전대책 및 수칙

### ຂໍ້ມູນທົ່ວໄປ
일반사항

- ກວດສອບໃຫ້ແນ່ໃຈວ່າໄດ້ມີການຕິດຕັ້ງອຸປະກອນດ້ານຄວາມປອດໄພໄວ້ໃນຕໍາແໜ່ງທີ່ກໍານົດ ເພື່ອປ້ອງກັນບໍ່ໃຫ້ມີການສໍາຜັດຖືກສ່ວນເປັນອັນຕະລາຍຕ່າງໆ
  위험부분의 접촉방지를 위한 안전장치는 정해진 위치에 고정
- ກວດສອບໃຫ້ແນ່ໃຈວ່າໄດ້ມີການຍຶດຕິດອຸປະກອນດ້ານຄວາມປອດໄພຕ່າງໆດ້ວຍນັອດກຽວ ເພື່ອປ້ອງກັນບໍ່ໃຫ້ເຄື່ອນທີ່
  안전장치는 철판 등에 볼트 등으로 움직이지 않도록 고정
- ກວດສອບໃຫ້ແນ່ໃຈວ່າໄດ້ມີການຕິດຕັ້ງອຸປະກອນຢຸດສຸກເສີນໄວ້ໃນຕໍາແໜ່ງທີ່ຄົນງານສາມາດຍື້ເຖິງໄດ້ງ່າຍ
  근로자의 손이 쉽게 닿는 곳에 비상정지장치 설치

### ມາດຕະການດ້ານຄວາມປອດໄພຂອງສາຍພານລໍາລຽງ
컨베이어 안전대책

- ຕິດຕັ້ງສະວິດຢຸດສຸກເສີນ
  비상정지 스위치 설치
- ເຄື່ອນຍ້າຍສິ່ງກີດຂວາງ ຫຼື ຂອງເສຍທີ່ໄຫຼລົ້ນຢູ່ອ້ອມຮອບສາຍພານລໍາລຽງອອກທັນທີ
  컨베이어 주변의 장애물과 엎질러진 폐기물 즉시 제거
- ຖ້າຫາກກວດພົບຂໍ້ຜິດພາດຢູ່ທີ່ສາຍພານ, ໃຫ້ປ່ຽນມັນທັນທີ ແລະ ປັບປ່ຽນເສັ້ນທາງ.
  벨트 이상이 감지될 경우 즉시 교체하고 경로 조정 실시
- ຕິດຕັ້ງຂົວຂ້າມສໍາລັບໃຫ້ຄົນງານຍ່າງຂ້າມສາຍພານລໍາລຽງທີ່ກໍາລັງເຮັດວຽກຢູ່
  운전 중인 컨베이어의 위로 근로자 통행시 건널다리 설치

### ຄວາມປອດໄພໃນການເຮັດວຽກ
작업안전

- ອະນຸຍາດໃຫ້ບຸກຄົນທີ່ໄດ້ຮັບອະນຸຍາດໃຊ້ເຄື່ອງຈັກໄດ້ເທົ່ານັ້ນ
  허가받은 사람만이 기계 사용
- ໃຫ້ຄວາມຮູ້ ແລະ ການຝຶກອົບຮົມເພື່ອໃຫ້ໃຊ້ງານຢ່າງປອດໄພ
  안전하게 사용할 수 있도록 운전자 교육과 훈련 지도
- ຕິດຕັ້ງອຸປະກອນສຸກເສີນທີ່ຈະຢຸດເຄື່ອງຈັກທັນທີ ໃນເວລາທີ່ຄົນງານເຂົ້າມາສໍາຜັດກັບສ່ວນທີ່ເປັນອັນຕະລາຍຂອງເຄື່ອງ
  기계장치의 위험 부분 접촉 시 즉시 정지하는 장치 마련